ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 79 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 21 ພຶດສະພາ 2024

ສຳນັກງານ ດດຊ
ເລກທີ...640...
ວັນທີ 22 MAY 2024
ໂທລະສັບ 021 217770

## ໜັງສືແຈ້ງ

ຮຽນ ...ບັນດາກົມ ແລະ ທຽບເທົ່າກົມ...

..ພາຍໃນ ທຫລ........................... ທີ່ນັບຖື.

ເລື່ອງ: ການເປີດບັນຊີ ແລະ ຕິດຕັ້ງແອັບ ໃຫ້ ກັບພະນັກງານ ທຫລ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022;
- ອີງຕາມ ໜັງສືສະເໜີ ຂອງທະນາຄານສົ່ງເສີມກະສິກຳ ສະບັບເລກທີ 159/ທສກ ສຂ.ນວ, ລົງວັນທີ 10 ພຶດສະພາ 2024.

ຫ້ອງການ ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບວ່າ: ທະນາຄານ ສົ່ງເສີມກະສິກຳ ຈຳກັດ ສາຂາ ນະຄອນຫຼວງ ໄດ້ແຈ້ງຈຸດປະສົງເພື່ອມານຳສະເໜີຜະລິດຕະພັນທີ່ທັນສະໄໝຮອບດ້ານ ໃຫ້ແກ່ພະນັກງານ ທຫລ, ພ້ອມທັງເປີດບັນຊີ ແລະ ຕິດຕັ້ງແອັບໃຫ້ຟຣີ ເພື່ອອຳນວຍຄວາມສະດວກໃນການໃຊ້ການບໍລິການ ໃຫ້ມີຄວາມສະດວກວ່ອງໄວ ເພີ່ມຂຶ້ນຕື່ມ. ກໍລະນີທາກມີພະນັກງານ ຂອງ ທຫລ ທີ່ມີຄວາມສົນໃຈໃນຜະລິດຕະພັນ ດັ່ງກ່າວ, ຫຼື ສົນໃຈໃນການເປີດບັນຊີ ກັບ ທະນາຄານສົ່ງເສີມກະສິກຳ, ແມ່ນສະເໜີໃຫ້ແຕ່ລະກົມສັງລວມລາຍຊື່ໃສ່ໃນຟາຍ Excel (ຕາມແບບຟອມ ທສກ ທີ່ຄັດຕິດມາພ້ອມນີ້)ແລ້ວສົ່ງມາຍັງ ຫ້ອງການ (ພະແນກເລຂານຸການ ແລະ ພິທີການ) ພາຍໃນວັນທີ 24 ພຶດສະພາ 2024; ພາຍຫຼັງສັງລວມຄວາມສົນໃຈຈາກພະນັກງານພາຍໃນ ທຫລ ສຳເລັດແລ້ວ, ທະນາຄານກ່ຽວຂ້ອງຈະອຳນວຍຄວາມສະດວກ ໃນການເປີດບັນຊີ, ຕິດຕັ້ງແອັບໃຫ້ ແລະ ພ້ອມທັງມານຳສະເໜີກ່ຽວກັບຜະລິດຕະພັນດັ່ງກ່າວຕື່ມ, ເອກະສານປະກອບສຳລັບຜູ້ທີ່ສົນໃຈ ໃນການເປີດບັນຊີປະກອບມີ: ສຳມະໂນຄົວ, ພາດສະປອດ, ບັດປະຈຳຕົວ, ບັດພະນັກງານ (ຢ່າງໃດຢ່າງໜຶ່ງທີ່ບໍ່ໝົດອາຍຸການໃຊ້ງານ).

**ໝາຍເຫດ:** ສຳລັບວັນ, ເວລາ ທີ່ ທາງທະນາຄານສົ່ງເສີມກະສິກຳ ຈະມານຳສະເໜີ ແລະ ຕິດຕັ້ງແອັບຕົວຈິງ ແມ່ນ ຫ້ອງການຈະແຈ້ງຕື່ມພາຍຫຼັງ.

**ຫົວໜ້າຫ້ອງການ**

ຫ້ອງການ

ພານຸສັກ ແກ່ນວົງພະຈັນ

ຕິດຕໍ່ປະສານງານ
ນ. ສຸປະຕາ ມາດມະນີວົງ
ເບີໂທ: 020 56668592